ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 1899 /ທຄຕລ...2025.....
ນະຄອນຫຼວງວຽງຈັນ, ວັນທີ:.........24 JUN 2025........

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ຈັດຈໍາໜ່ວຍອຸປະກອນໄອທີ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຊົ່າຈັກອັດເອກະສານ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດ ຈັດຈໍາໜ່າຍອຸປະກອນໄອທີ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານ ຍື່ນຊອງປະມູນລາຄາເຊົ່າຈັກອັດເອກະສານຂອງ ທຄຕລ ສໍານັກງານໃຫຍ່ ຈໍານວນ 20 ເຄື່ອງດັ່ງລາຍລະອຽດລຸ່ມນີ້

## I. ລາຍການສະເປັກເຄື່ອງ

- ຈັກອັດເອກະສານຍີ່ຫໍ້ ທີ່ສາມາດຮອງຮັບການສັ່ງພິມຜ່ານທາງຄອມພິວເຕີໄດ້ທັງລະບົບ Windows ແລະ Ubuntu;
- ສາມາດສະແກນ/ພິມໄດ້ສອງໜ້າ;
- Copy/Scanner/Print Speed 45ppm | 55pm;
- First output: 3.1 secs, Warmup: 30 secs;
- Print Resolutions: 2400 dpi or equivalent x 600 dpi;
- Memory | Hard Disk: 4GB | 160GB;
- Paper Tray | Bypass Tray: 4 x 500 sheets | 1 x 95 sheets;
- Paper Size: A3-A6 and B4-B7;
- Printer/Scanner: Built-in PCL, Mono print, colors scan.

## II. ເງື່ອນໄຂການປະກອບເອກະສານການປະມູນ

### 1. ເອກະສານຊອງທີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດ (ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2023/2024, ໃບຢັ້ງຢືນຕົວແທນຈັດຈໍາໜ່າຍ);
2) ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນ, ໄລຍະຈັດສົ່ງ, ການອັບເດດ Software, ການຝຶກອົບຮົມການໃຊ້ງານໃຫ້ພະນັກງານ ທຄຕລ, ລະບຸປີຜະລິດ-ປະເທດຜະລິດສິນຄ້າ, ການບໍາລຸງຮັກສາການບໍລິການຫຼັງການຂາຍ, ການຮັບປະກັນການເຊົ່າຄືນ ໃນກໍລະນີບໍ່ສາມາດສະໜອງເຄື່ອງຈັກໃຫ້ຕາມຈໍານວນ ແລະ ເງື່ອນໄຂອື່ນໆຢ່າງລະອຽດຕາມ Format ຄັດຕິດມາພ້ອມນີ້;
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຢ່າງໜ້ອຍ 2 ປີ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;
4) ກໍານົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **17/07/2025** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່, ປ້ອງຂາອອກ-ຂາເຂົ້າ ອາຄານຕຶກ C ຊັ້ນ 4.



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5

2. **ເອກະສານຊອງທີ 2 (ປິດຊອງ)**

1) ບໍລິສັດຕ້ອງແຈ້ງລາຄາເປັນ 02 ສະບັບ ໃຫ້ລະບຸເປັນສະກຸນເງິນກີບ ຕໍ່ເດືອນ ແລະ ຕໍ່ປີ ທີ່ລວມອາກອນມູນຄ່າເພີ່ມ ດັ່ງນີ້:
   - ສະເໜີລາຄາທີ່ສາມາດນໍາໃຊ້ແບບຈໍາກັດມີເຕີ, ລາຄາເກີນຕໍ່ມີເຕີ (ລະບຸຈໍານວນເພດານມີເຕີທີ່ນໍາໃຊ້);
   - ສະເໜີລາຄາທີ່ນໍາໃຊ້ແບບບໍ່ຈໍາກັດມີເຕີ.
2) ໃນວັນທີ **22/07/2025** ເວລາ **9:00** ໂມງ ແມ່ນມື້ເປີດຊອງລາຄາປະມູນ ແຈ້ງໃຫ້ບໍລິສັດຈະຫ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ ທຄຕລ ສໍານັກງານໃຫຍ່, ອາຄານຕຶກ C ຊັ້ນ 5 ຫ້ອງປະຊຸມ 5/2;
3) ຜູ້ເຂົ້າຮ່ວມຍື່ນຊອງປະມູນ ຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/10/2025) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

## III. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາກັບ ທຄຕລ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ;
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ໄລຍະເວລາ 1 ປີ (ປີຕໍ່ປີ) ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ຮັບເໝົາ;
3) ທຄຕລ ຂໍສະຫງວນສິດໃນການປະຕິເສດຜູ້ສະໜອງໃດທີ່ປະກອບເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດໃນໜັງສືແຈ້ງເຊີນນີ້;
4) ຕ້ອງມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ພາຍໃນ 1-2 ຊົ່ວໂມງ ວັນຈັນ-ວັນສຸກ ເວລາ 8:00-17:00 ໂມງ;
5) ບໍລິສັດຕ້ອງຮັບຜິດຊອບນໍ້າມຶກ ແລະ ອາໄຫຼ່ຂອງເຄື່ອງຈັກ ສ່ວນ ທຄຕລ ມີໜ້າທີ່ອໍານວຍຄວາມສະດວກສະຖານທີ່ຕັ້ງ, ເຈ້ຍ, ໄຟຟ້າ ແລະ ສາຍອິນເຕີເນັດ;
6) ການຊໍາລະຄ່າບໍລິການແມ່ນເປັນລາຍເດືອນລວມອາກອນມູນຄ່າເພີ່ມ ດ້ວຍສະກຸນເງິນກີບ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ຜູ້ອໍານວຍການ**

ນ. ສາຍສະໝອນ ຈັນທະຈັກ

**<u>ຜູ້ປະສານງານ:</u>**

ທ່ານ ພູວອນ ສີອິນໄຊ 020 5955 9889

ທ້າວ ຄໍາຫຼ້າ ເພັດມີໄຊ 020 7777 7096

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............./ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບຢັ້ງຢືນການຈັດຈຳໜ່າຍ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງ ອຸປະກອນໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2025) | (xxx/ 02.01.2025) | | .... ປີ | (ໃຫ້ລະບຸ) | | ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ) | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: